**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ຫ້ອງວ່າການລັດຖະບານ

ເລກທີ 790 ຫລບ.ກລຊ

ນະຄອນຫລວງວຽງຈັນ, ວັນທີ 21-5-2015.

## ແຈ້ງການ

ຮຽນ : - ທ່ານລັດຖະມົນຕີວ່າການກະຊວງ ກະສິກຳ ແລະ ປ່າໄມ້.

- ທ່ານລັດຖະມົນຕີວ່າການກະຊວງ ການເງິນ.
- ທ່ານລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ.

ເລື່ອງ : ສະເໜີພິຈາລະນາການປັບປຸງລາຄາພັນທະໄມ້ ສົກປີ 2014-2015.

- ອີງຕາມເອກະສານລາຍງານສະບັບເລກທີ0204/ອຄ.ກຂອ, ລົງວັນທີ 06 ກຸມພາ 2015 ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ.
- ອີງຕາມການຊີ້ນຳ ແລະ ຕົກລົງຂອງກອງປະຊຸມ ນາຍົກ-ຮອງນາຍົກລັດຖະມົນຕີ ຮ່ວມກັບ ຂະແໜງການກ່ຽວຂ້ອງ ຄັ້ງວັນທີ 03 ເມສາ 2015.
- ອີງຕາມການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ແລະ ທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດການຜະລິດ ແລະ ຈໍລະຈອນ ຄັ້ງວັນທີ 12 ພຶດສະພາ 2015.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງທ່ານນາຍົກລັດຖະມົນຕີ ແລະ ທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດການຜະລິດ ແລະ ຈໍລະຈອນ ມາຍັງທ່ານຊາບ ດັ່ງນີ້ : "1). ລາຄາພັນທະໄມ້ ສົກປີ 2014-2015 ແມ່ນໃຫ້ກຳນົດເປັນລາຄາດຽວຢູ່ສະໜາມ II ເພື່ອເປັນລາຄາພື້ນຖານໃນການຄິດໄລ່ ແລະ ປະມູນຂາຍໄມ້ ໂດຍມອບໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນຜູ້ກຳນົດລາຄາດັ່ງກ່າວ ໃຫ້ສອດຄ່ອງກັບກົດໝາຍ ແລະ ສະພາບການຕົວຈິງຂອງຕະຫຼາດໂລກ.

2). ຫ້າມສົ່ງໄມ້ທ່ອນທຸກປະເພດ ອອກໄປຕ່າງປະເທດຢ່າງເດັດຂາດ. ສຳລັບໄມ້ທີ່ຕົກຄ້າງຢູ່ສະໜາມ II ທີ່ລັດຖະບານ ໄດ້ຕົກລົງອະນຸມັດໃຫ້ສົ່ງອອກຜ່ານມາ ແຕ່ຈັດຕັ້ງປະຕິບັດບໍ່ທັນສຳເລັດ. ແມ່ນມອບໃຫ້ແຂວງສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາຄືນຈຳນວນໄມ້ທີ່ມີຕົວຈິງໃນສະໜາມ II ນັ້ນ ມີຈຳນວນເທົ່າໃດ ແມ່ນໃຫ້ເອົາມາປຸງແຕ່ງ ແລະ ຂາຍຢູ່ພາຍໃນ ຫຼື ຕ່າງປະເທດ , ຫ້າມສົ່ງໄມ້ທ່ອນອອກຢ່າງເດັດຂາດ.

3). ສຳລັບໄມ້ທີ່ຂຸດຄົ້ນອອກຈາກໂຄງການຕ່າງໆ, ເປັນຕົ້ນແມ່ນໂຄງການກໍ່ສ້າງພື້ນຖານໂຄງລ່າງ, ໂຄງການກໍ່ສ້າງເຂື່ອນໄຟຟ້າ, ໂຄງການຂຸດຄົ້ນບໍ່ແຮ່, ໂຄງການຂຸດຄົ້ນອອກຈາກແລວສາຍໄຟຟ້າ ແລະ ຂຸດຄົ້ນອອກຈາກໂຄງການພັດທະນາຕ່າງໆ ແມ່ນໃຫ້ຂາຍໃຫ້ບັນດາໂຮງງານປຸງແຕ່ງຢູ່ພາຍໃນ.

4). ສຳລັບໄມ້ປູກແມ່ນສົ່ງເສີມໃຫ້ປຸງແຕ່ງຢູ່ພາຍໃນ, ຖ້າບໍ່ສາມາດປຸງແຕ່ງໄດ້ ແມ່ນໃຫ້ສົ່ງອອກເປັນໄມ້ທ່ອນ, ແຕ່ຕ້ອງມີເອກະສານຢັ້ງຢືນຄົບຖ້ວນຈາກອຳນາດການປົກຄອງ ແລະ ຂະແໜງການກ່ຽວຂ້ອງ ກ່ຽວກັບແຫຼ່ງທີ່ມາຂອງໄມ້ໃຫ້ຊັດເຈນ ແລະ ສອດຄ່ອງກັບລະບຽບກົດໝາຍ..

5). ມອບໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ສົມທົບກັບກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງ ການເງິນ ແລະ ພາກສ່ວນກ່ຽວຂ້ອງ ເປັນເຈົ້າການຕິດຕາມ, ກວດກາ, ຖ້າພົບເຫັນທຸກກໍລະນີທີ່ລະເມີດ ແມ່ນໃຫ້ດຳເນີນການຕາມລະບຽບກົດໝາຍຢ່າງເຂັ້ມງວດ.

6). ມອບໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ຮີບຮ້ອນສືບຕໍ່ສົມທົບກັບບັນດາແຂວງ ເພື່ອປັບປຸງ ແລະ ດັດສົມບັນດາໂຮງງານປຸງແຕ່ງໄມ້ໃຫ້ໄດ້ມາດຕະຖານ ແລະ ສອດຄ່ອງກັບສະພາບຕົວຈິງໃນການສະໜອງວັດຖຸດິບ. "

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມຈິດໃຈຂໍ້ນຳນີ້ດ້ວຍ.

ລັດຖະມົນຕີ,ຫົວໜ້າຫ້ອງວ່າການລັດຖະບານ

<u>ບ່ອນນຳສົ່ງ :</u>

- ນາຍົກ-ຮອງນາຍົກ 06 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ຫ້ອງວ່າການສະພາແຫ່ງຊາດ 01 ສະບັບ
- ອົງການກວດກາລັດຖະບານ 01 ສະບັບ
- ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 01 ສະບັບ
- ກລຂ, ກລສ 01 ສະບັບ
- ເກັບມ້ຽນ 08 ສະບັບ

ເພັດສາຄອນ ຫຼວງອາໄພ